# ຂ່າວອອກ ບົດ

# ບົດອອກຂ່າວ

**ກອງປະຊຸມໂຕະມົນປະຈຳປີ 2018 ທີ່ນະຄອນຫຼວງວຽງຈັນ ໄດ້ຊຸກຍູ້ການຮ່ວມມື ເພື່ອການພັດທະນາທີ່ມີປະສິດຜົນ ແລະ ການພັດທະນາແບບຍືນຍົງ ເຂົ້າໃນການຜັນຂະຫຍາຍໝາກຜົນຂອງການສະຫຼຸບກາງສະໄໝແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ່ VIII.**

ກອງປະຊຸມໂຕະມົນປະຈຳປີ 2018 ໄດ້ຈັດຂຶ້ນໃນວັນທີ 4 ທັນວາ 2018 ທີ່ນະຄອນຫຼວງວຽງຈັນ, ໂດຍການເປັນປະທານກອງປະຊຸມວິຊາການໃນພາກເຊົ້າຂອງ ທ່ານ ປອ ກິແກ້ວ ຈັນທະບູຣີ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ແລະ ທ່ານ ນາງ ຄາຣີນາ ອິມໂມເນັນ, ຜູ້ປະສານງານອົງການສະຫະປະຊາຊາດ ທັງເປັນຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ ໂດຍມີຜູ້ເຂົ້າຮ່ວມ 200 ກວ່າຄົນ, ຈາກສູນກາງ ແລະ ທ້ອງຖິ່ນ, ພ້ອມທັງບັນດາຄູ່ຮ່ວມພັດທະນາ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ, ອົງການທີ່ບໍ່ຫວັງຜົນກຳໄລ ແລະ ພາກເອກະຊົນເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນພາຍໃຕ້ຫົວຂໍ້: "ການສະຫຼຸບກາງສະໄໝການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ່ VIII. ຄວາມຄືບໜ້າການຈັດຕັ້ງປະຕິບັດເປົ້າໝາຍພັດທະນາແບບຍືນຍົງ ແລະ ວຽກງານການຮ່ວມມື ເພື່ອການພັດທະນາທີ່ມີປະສິດທິຜົນ".

ກອງປະຊຸມໄດ້ຮັບຟັງການລາຍງານຜົນຂອງການທົບທວນກາງສະໄໝຂອງການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII ແລະ ໄດ້ຈັດການປຶກສາຫາລືໃນຮູບແບບກຸ່ມສົນທະນາ ເຊິ່ງໄດ້ສຸມໃສ່ການປຶກສາຫາລື ໃນ 4 ຂົງເຂດຕົ້ນຕໍຄື:

1. ເປົ້າໝາຍ 1 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII : ການເຕີບຕໍ່ຢ່າງຕໍ່ເນື່ອງ, ໝັ້ນທ່ຽງ ແລະ ສົມດຸນດ້ານເສດຖະກິດ;
2. ເປົ້າໝາຍ 2 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII : ການພັດທະນາຊັບພະຍາ ກອນມະນຸດ ແລະ ສັງຄົມ;
3. ເປົ້າໝາຍ 3 ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII : ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກຽມພ້ອມຮັບມືກັບໄພພິບັດທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ;
4. ດ້ານວຽກຈຸດສຸມປິ່ນອ້ອມທີ່ຕິດພັນກັບຫຼາຍຂະແໜງການຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII: ການປົກຄອງລັດດ້ວຍກົດໝາຍ ແລະ ການປະຕິບັດກົດໝາຍ.

ໃນຕອນບ່າຍຂອງມື້ດຽວກັນ, ຄະນະຜູ້ເຂົ້າຮ່ວມກອງປະຊຸມໄດ້ເດີນທາງໄປຢ້ຽມຢາມໂຄງການ ສວນກະເສດອິນຊີ ບ້ານທ່າຊ້າງ ເມືອງປາກງື່ມ ແລະ ໂຄງການກໍ່ສ້າງເສັ້ນທາງລົດໄຟ ລາວ-ຈີນ ທີ່ເມືອງນາຊາຍທອງ. ໃນຕອນແລງ ໄດ້ມີການຈັດພິທີບາສີສູ່ຂັວນເພື່ອ ແລະ ຮັບປະທານອາຫານເພື່ອເປັນກຽດຕ້ອນຮັບຄະນະປະທານ ແລະ ຜູ້ເຂົ້າຮ່ວມກອງປະຊຸມໂຕະມົນປະຈຳປີ 2018.

ສຳລັບກອງປະຊຸມປຶກສາຫາລືລະດັບນະໂຍບາຍ ຊຶ່ງແມ່ນກອງປະຊຸມປະຈຳປີ 2018 ທາງການແມ່ນໄດ້ຈັດຂຶ້ນໃນວັນທີ 05 ທັນວາ 2018, ຈະໄດ້ຮັບຟັງການລາຍງານຜົນຂອງການປຶກສາຫາລືກຸ່ມສົນທະນາຕ່າງໆໃນວັນທີ 04 ທັນວາ 2018 ແລະ ປະເດັນທີ່ສຳຄັນກ່ຽວກັບການພັດທະນາ ເປັນຕົ້ນແມ່ນການທົບທວນກາງສະໄໝຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ແລະ ການຜັນຂະຫຍາຍເປົ້າໝາຍການພັດທະນາແບບຍືນຍົງໃຫ້ເຂົ້າກັບສະພາບຕົວຈິງ, ພ້ອມທັງການກະກຽມເພື່ອຂ້າມຜ່ານການຫຼຸດພົ້ນອອກຈາກສະພາບປະເທດດ້ອຍພັດທະນາ.
ກອງປະຊຸມດັ່ງກ່າວຈະໃຫ້ກຽດກ່າວເປີດກອງປະຊຸມໂດຍ ພະນະທ່ານ ສົມດີ ດວງດີ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ ແລະ ທ່ານ ນາງ ວາເລີຣີ ຄລິຟ, ຮອງຜູ້ອຳນວຍການຮັບຜິດຊອບພາກພື້ນອາຊີ-ປາຊີຟິກ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ທັງເປັນ ຫົວຫນ້າຫ້ອງການປະຈຳພາກພື້ນປະຈຳຢູ່ບາງກອກ.

ພິເສດ, ເພື່ອເປັນການຈັດຕັ້ງປະຕິບັດນາໂຍບາຍການພັດທະນາສີຂຽວ ກອງປະຊຸມໂຕະມົນປະຈຳປີ 2018 ໄດ້ຊຸກຍູ້ໃຫ້ມີການຫຼຸດຜ່ອນການນຳໃຊ້ປາສຕິກ ແລະ ເຈ້ຍ ຊຶ່ງຜູ້ເຂົ້າຮ່ວມຈະໄດ້ຮັບຈອກນ້ຳ ແລະ ຂວດນ້ຳດື່ມທີ່ສາມາດນຳໃຊ້ຄືນໄດ້ ແລະ ຈະມີການຫຼຸດຜ່ອນການພິມເອກະສານໃຫ້ຫຼາຍທີ່ສຸດ.

**Contacts**


- **Mr. Morakot Vongxay, Director of UN Division at Department of International Cooperation, Ministry of Planning and Investment**: Tel: 020-22448892, Email: k_vongxay@hotmail.com
- **Ms. Ildiko Hamos-Sohlo, Communications Specialist, UN in Lao PDR**: Tel: 020 7717 7913, Email: ildiko.hamos@one.un.org
- **Mr. Somlith Khounpaseuth,** Communications Associate, UNDP Lao PDR: Tel: 20 777 118 74, Email: somlith.khounpaseuth@undp.org